# ແຜນການສອນ
## ບົດຮຽນໂຮງຮຽນວັນອາທິດ
### ວັນອາທິດ ທີ 19 ພະຈິກ 2006 ( 11-19-2006 )

---

## ດຳເນີນຊີວິດໃນຄວາມຈິງ, ບໍ່ແມ່ນການລໍ້ລວງ:
### ເອຊາຢາ 40:18-23; 41:5-7; 44:9,18-20; 45:20-22

**ຂໍ້ພຣະຄັມພີໃນບົດຮຽນ:** ເອຊາຢາ 40:18-23

**ຄວາມຈິງໃນພຣະຄັມພີ:** ຫລີກໜີຈາກທຸກສິ່ງທີ່ຢູ່ນອກເໜືອຈາກຄວາມຈິງ ແລະນອກຈາກພຣະເຈົ້າຜູ້ຊົງພຣະຊົນຢູ່, ນັ້ນແມ່ນເປັການນັບຖືຮູບໂຄຣົບ. ເຫດຜົນທີ່ຈະໄດ້ຮັບຈາກການຂາບໄຫ້ວຮູບໂຄຣົບມີຄື: ຄວາມລະອາຍຂາຍໜ້າຕົນເອງ ແລະຈະຫລົງຫາຍຈາກຊີວິດທີ່ພຣະເຈົ້າຊົງປະທານໃຫ້.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ແມ່ນເພື່ອຊ່ວຍໃຫ້ທ່ານມີປະສົບການຢ່າງເຕັມປ່ຽມໃນການດຳເນີນຊີວິດທີ່ມີຄວາມສັມພັນທີ່ພຣະເຈົ້າໄດ້ຊົງປະທານໃຫ້ໂດຍ:

- ມີຄວາມເຂົ້າໃຈໃນເຣື່ອງຂອງການນັບຖືນຮູບໂຄຣົບ ແລະຜົນສະທ້ອນຂອງມັນ.
- .ຄວາມກະຕືລືລົ້ນໃນການເຊື່ອໝັ້ນໃນພຣະເຈົ້າອົງດຽວ ແລະຫລີກເວັ້ນຈາກຮູບໂຄຣົບທຸກສນິດ.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "**ແຜນການສອນ**", ໝາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

## ບົດນຳ:

1). ເພື່ອຄວາມກະຈ່າງແຈ້ງຕໍ່ການຮຽນບົດຮຽນນີ້ຂໍໃຫ້ຄຣູສອນອະທິບາຍກ່ຽວກັບການຂາບໄຫວ້ບູຊາຮູບໂຄຣົບໃຫ້ນັກຮຽນໄດ້ເຂົ້າໃຈ

**ຄຳຖາມ:** ທ່ານສາມາສາດອະທິບາຍເຣື່ອງການຂາບໄຫວ້ບູຊາຮູບໂຄຣົບໄດ້ບໍ? ວ່າມີເຫດຜົນອັນໃດແດ່ ? ທ່ານ ເອງເຄີຍໄດ້ບູຊາຫລືບໍ່?

**ອະທິບາຍ:** ບາງຄົນໄດ້ຖືເອົາການບູຊາຮູບໂຄຣົບເປັນນຶ່ງໃນຊີວິດຕາມຄວາມຄິດຕົນເອງ ເຫດຜົນນັ້ນກໍຄື:

1. ເຂົາມີຄວາມຮູ້ສຶກ ຫລືເຊື່ອວ່າເປັນພຣະເຈົ້າແທ້ ແລະຈະຊ່ອຍໃນການດຳເນີນຊີວິດໃຫ້ດີຂື້ນຕາມທີ່ປາກົດ ໃນພຣະຄັມພີ.

**ຄຳຖາມ:** ການບູຊາຮູບໂຄຣົບໃນສັງຄົມປະຈຸບັນເປັນແນວໃດ?

## 1. <u>ພຣະເຈົ້າເປັນຢ່າງໃດ? ປຽບໃສ່ສິ່ງໃດ!</u> ( ເອຊາຢາ 40:18-23 )

1) ຂໍໃຫ້ນັກຮຽນອາສາສມັກອ່ານ ເອຊາຢາ 40:18-23

2) **ອະທິບາຍ:** ຕາມທັສນະຂອງທ່ານເອຊາຢາໃນບົດນີ້ ທ່ານໄດ້ຫລຽວເຫັນເຫດການທີ່ ຊົນຊາດອຣສຣາເອລ ໄດ້ຮັບຄວາມທໍຣະມານຫົວໃຈ ແລະໄດ້ເປັນຄົນອົພຍົບຍ້ອນບໍ່ເຊື່ອຟັງພຣະເຈົ້າ.

3) **ຖາມ:** ທ່ານເດ? ທ່ານຈະປຽບພຣະເຈົ້າໃສ່ສິ່ງໃດ?

5. **ອະທິບາຍ:** ໃນຂໍ້ທີ 21-23 ໃນ 3 ຂໍ້ນີ້ໄດ້ສອນວ່າພຣະເຈົ້າເປັນຜູ້ສ້າງໂລກ ແລະພຣະອົງຊົງໃຫ້ມັນຢູ່ບ່ອນທີ່ພຣະອົງຊົງສັ່ງນັ້ນຕລອດມາ.

- ຊົນຊາດອິສຣາເອນຮູ້ເຣື່ອງນີ້ວ່າເປັນຄວາມຈິງ.
- ທ່ານເອຊາຢາເຂົ້າໃຈໃນການອົພຍົບຄັ້ງຕໍ່ໄປຈະເປັນການທົດລອງພື້ນຖານຄວາມເຊື່ອໃນພຣະເຈົ້າຂອງເຂົາ.

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> ເອຊາຢາ 40:18-23

1) ທ່ານເອຊາຢາຄິດວ່າພຣະເຈົ້າໄດ້ປຽບທຽບຮູບໂຄຣົບໃສ່ ສິ່ງໃດ? ຫລືໃສ່ໃຜ?

2) ແມ່ນອັນໃດເປັນສູນກາງເຣື່ອງຂອງພຣະທັມເອຊາຢາບົດທີ 40:18-23 ນີ້?

3) ມີອັນໃດແດ່ທີ່ທ່ານບໍ່ເຫັນດ້ວຍກັບຄົນອື່ນທີ່ຫັນຫລັງໃຫ້ກັບພຣະເຈົ້າໄປຫາຮູບໂຄຣົບ?

## 2. <u>ແມ່ນຫຍັງເປັນສິ່ງຫລໍ່ລ້ຽງຮູບໂຄຣົບ? ຄວາມຢ້ານກົວ!:</u> ( ເອຊາຢາ 41:5-7 )

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ ເອຊາຢາ 41:5-7

2) ໃຫ້ຍົກເອົາຂໍ້ນຶ່ງໃນບົດທີ 41:1-2 ມາ ວິຈັຍວ່າ ພຣະເຈົ້າຈະໃຫ້ຝ່າຍໃດເປັນຜູ້ພ່າຍແພ້

3) ແມ່ນການກະທຳຂອງຊົນຊາດໃດທີ່ເຮັດໃຫ້ມີຄວາມສງົບ. ມີຄຳນຶ່ງທີ່ເຮັດໃຫ້ຢ້ານກົວ.

4) **ຄຳຖາມ:** ຄວາມຢ້ານກົວເຮັດໃຫ້ຊາດປ່ຽນແປງທາງໃດແດ່ບໍ?

5) ຄວາມຢ້ານກົວສາມາດເຮັດໃຫ້ເຂົາກາຍມາເປັນຜູ້ຂາບໄຫ້ວຮູບໂຄຣົບໄດ້ບໍ?

(1) ມີທາງໃດແດ່ທີ່ສາມາດໃຫ້ເຮົາຢືນໝັ້ນຢູ່ໃນຄວາມເຊື່ອໃນພຣະເຈົ້າອົງທ່ຽງແທ້?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ** ເອຊາຢາ 41:5-7

1. ແມ່ນການໂຕ້ຕອບວິທີໃດທີ່ເຮັດໃຫ້ເຂົາຊະນະການໂຈມຕີຂອງຣັດທີນິຍົມຮູບໂຄຣົບ?
2. ແມ່ນຄວາມຢ້ານກົວອັນໃດທີ່ນຳພາເຂົາເຮັດຢ່າງນີ້?
3. ຂັ້ນຕອນໃດທີ່ຄົນໃນສມັຍນີ້ຄວນຈະເອົາຄວາມຢ້ານກົວອອກຈາກຕົນ ? ເຂົາຄວນຄຳນຶງ ແລະຈົດຈຳ ແລະມອບຕົນໃຫ້ກັບພຣະເຈົ້າ.

## 3. <u>ຮູບໂຄຣົບນຳທາງໄປໃສ? ການຫລອກລວງຕົນເອງ:</u> ( ເອຊາຢາ 44:9,18-20 )

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ເອຊາຢາ 44:9,18-20

2) **ຄຳຖາມ:** ຄົນທີ່ນະມັສການຮູບໂຄຣົບຕີຄວາມໝາຍໃນຂໍ້ນີ້?

3) ເປັນຫຍັງທ່ານຈຶ່ງຄິດວ່າ ພຣະຄຳໃນຂໍ້ນີ້ບອກວ່າບໍ່ມີຄຸນຄ່າ?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ** ເອຊາຢາ 44:9,18-20

1. ເປັນດ້ວຍເຫດໃດທ່ານຈຶ່ງຄິດວ່າພຣະຄຳໃນຂໍ້ທີ 9 ບອກວ່າບໍ່ມີຄຸນຄ່າ?
2. ທາງໃດຕາມທີ່ຂໍ້ 18-20 ເວົ້າກ່ຽວກັບຜູ້ທີ່ນະມັສການຮູບໂຄຣົບເປັນຄືຮູບໂຄຣົບ?
3. ທ່ານຄວນຈະເວົ້າກັບຄົນເຊັ່ນນັ້ນເພື່ອເປັນການໜູນນ້ຳໃຈ ຫລືແນະນຳເຂົາໃຫ້ຮູ້ຈັກພຣະເຈົ້າອົງທ່ຽງແທ້.

**4. ຜູ້ໃດສາມາດທີ່ຈະຊ່ວຍໃຫ້ພົ້ນໄດ້? ພຣະເຈົ້າອົງດຽວ!** ເອຊາຢາ 45:20-22

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ເອຊາຢາ 45:20-22

2) ໃຫ້ຍົກຣະດັບຄວາມເປັນທັມ ແລະລັກສະນະຂອງພຣະເຈົ້າໃນຂໍ້ 20-22 ນີ້ຂຶ້ນມາສົນທະນາກັບນັກຮຽນ.

3) ປຽບທຽບຄວາມຮູ້ ຣະຫວ່າງຄວາມສາມາດຂອງພຣະເຈົ້າອົງທ່ຽງແທ້ກັບພຣະອື່ນ ໆ ໃນເຣື່ອງຄວາມຮັກ, ເຣື່ອງຄວາມສັມພັນ, ການຊ່ວຍເຫລືອມະນຸດ ເພື່ອຈະໄດ້ເຂົ້າໃຈແຈ້ງວ່າມີຄວາມແຕກຕ່າງກັນຢ່າງໃດ?

**ອະທິບາຍ**: 1) ຄວາມຈິງມີແຕ່ພຣະເຈົ້າອົງທ່ຽງແທ້ພຽງອົງດຽວເທົ່ານັ້ນທີ່ຊ່ອຍໃຫ້ມະນຸດໃຫ້ລອດພົ້ນໄດ້.

2) ມີແຕ່ພຣະເຈົ້າອົງທ່ຽງແທ້ເທົ່ານັ້ນທີ່ຮູ້ໃນອະນາຄົດ ແລະພຣະຄຳຂອງພຣະອົງກໍປາກົດເປັນຈິງມາຕລອດ.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ**: ເອຊາຢາ 45:20-22

1) ພຣະຄຳຂອງພຣະເຈົ້າໄດ້ເວົ້າກ່ຽວກັບມະນຸດໃນຂໍ້ຕ່າງ ໆ ເຫລົ່ານີ້ຢ່າງໃດ?

2) ທ່ານຮູ້ຜູ້ໃດທີ່ທຳຜິດໃນການນະມັສການຮູບໂຄຣົບ ທ່ານສາມາດບອກເຣື່ອງພຣະເຈົ້າອົງທ່ຽງແທ້ມີອົງດຽວໃຫ້ແກ່ຄົນນັ້ນໄດ້ບໍ?

**ສລຸບ**:

1. ບໍ່ມີສິ່ງໃດຈະທຽບກັບພຣະເຈົ້າໄດ້ ພຣະອົງບໍ່ໄດ້ສະຖິດຢູ່ໃນຮູບໂຄຣົບແລະບໍ່ໄດ້ຈຳກັດຢູ່ໃນຄວາມຄິດຂອງມະນຸດ
2. ພວກເຮົາບໍ່ຄວນໃຫ້ຄວາມຢ້ານກົວເຮັດໃຫ້ເຮົາສ້າງຮູບໂຄຣົບ
3. ພຣະເຈົ້າເທົ່ານັ້ນທີ່ຍົກໂທດຄວາມຜິດຄວາມບາບໃຫ້ພວກເຮົາໄດ້, ຢ່າໃຫ້ພວກເຮົາຖືກຫລອກຈາກສິ່ງອື່ນວ່າຈະຊ່ອຍພວກເຮົາ.
4. ຈົ່ງພິຈາຣະນາ ຕຶກຕອງເຣື່ອງການນະມັສການພຣະເຈົ້າ ແລະການນະມັສການຮູບໂຄຣົບໃຫ້ຖີ່ຖ້ວນ.
5. ນຳພານັກຮຽນອະທິຖານປິດຫ້ອງຮຽນ